| ລາຍລະອຽດຂໍ້ມູນທີ່ໄດ້ຮັບ | | |
|---|---|---|
| ຊື່ໃບອະນຸຍາດ | ໃບຢັ້ງຢືນການຈົດທະບຽນແບບອຸດສາຫະກຳ | |
| ປະເພດຂອງໃບອະນຸຍາດ | ໃບຢັ້ງຢືນ | |
| ເລກລະຫັດໃບອະນຸຍາດ | ວັນທີ | ໜ່ວຍງານຮັບຜິດຊອບ |
| MoST-IPD-19 | 22.12.2017 | ກົມຊັບສິນທາງປັນຍາ |

| ຂໍ້ມູນພື້ນຖານ | |
|---|---|
| ຮູບແບບການສົ່ງຄຳຮ້ອງ | ຢູ່ທີ່ຫ້ອງການເຈົ້າຫນ້າທີ່ |
| ປະເພດທຸລະກິດ ສະເພາະ ທີ່ຕິດພັນກັບ ໃບອະນຸຍາດ | ທຸກພາກສ່ວນ |
| ຈຸດປະສົງທີ່ຕ້ອງຂໍ ໃບອະນຸຍາດ | ຈົດທະບຽນເພື່ອໄດ້ຮັບການປົກປ້ອງສິດ ເໜືອ ແບບອຸດສາຫະກຳ ທີ່ຕົນສ້າງຂຶ້ນ ພາຍໃຕ້ກົດໝາຍ ຂອງ ສປປ ລາວ ແລະ ພາຍໃນຂອບເຂດທົ່ວ ສປປ ລາວ |
| ຜູ້ທີ່ຕ້ອງຂໍໃບອະນຸຍາດ | ຜູ້ເປັນເຈົ້າຂອງ ແບບອຸດສາຫະກຳ ຊຶ່ງໝາຍເຖິງ ຮູບແບບ ຫລື ຮູບຮ່າງຂອງຜະລິດຕະພັນ ທີ່ຈະສ້າງຂຶ້ນ ຊຶ່ງປະກອບດ້ວຍຮູບຮ່າງ, ລວດລາຍ, ເສັ້ນສາຍ, ສີສັນ ແລະ ອື່ນໆ ແລະ ເປັນຜູ້ທີ່ມີຈຸດປະສົງຈະໄດ້ຮັບການປົກປ້ອງ ແບບອຸດສາຫະກຳ ດັ່ງກ່າວ ໃນຂອບເຂດ ສປປ ລາວ |
| ມີຂໍ້ມູນໃບອະນຸຍາດ ອອນລາຍບໍ່? | ແມ່ນແລ້ວ |
| ທີ່ຢູ່ຂອງຂໍ້ມູນອອນລາຍ | www.most.gov.la |
| ມີແບບຟອມໃບຄຳຮ້ອງ ໃບອະນຸຍາດ ຫລືບໍ່? | ແມ່ນແລ້ວ |
| ຄຳເຫັນອື່ນ ທີ່ຕິດພັນ ກັບ ໃບອະນຸຍາດ | 1. ບຸກຄົນ, ນິຕິບຸກຄົນ ຫລື ການຈັດຕັ້ງ ທີ່ຢູ່ຕ່າງປະເທດ ຊຶ່ງມີຈຸດປະສົງຂໍຈົດທະບຽນຊັບສິນທາງປັນຍາ ຢູ່ ສປປ ລາວ ຕ້ອງໄດ້ມີຕົວແທນ ທີ່ຖືກຕ້ອງຕາມກົດໝາຍ ຢູ່ ສປປ ລາວ ເພື່ອດຳເນີນທຸລະກຳ ທີ່ກ່ຽວຂ້ອງກັບ ວຽກງານຊັບສິນທາງປັນຍາ ຢູ່ ສປປ ລາວ 2. ສຳນວນຄຳຮ້ອງຂໍຈົດທະບຽນ ແລະ ເອກະສານຄັດຕິດອື່ນໆ ສາມາດເຮັດເປັນພາສາລາວ ຫລື ອັງກິດກໍ່ໄດ້. ຖ້າວ່າ ຄຳຮ້ອງຂໍ ຫລື ເອກະສານ ທີ່ໄດ້ເຮັດເປັນພາສາອັງກິດ, ຕ້ອງຍື່ນສະບັບແປ ເປັນພາສາລາວ ໂດຍໄດ້ຮັບການຢັ້ງຢືນຄວາມຖືກຕ້ອງ ພາຍໃນ 90 ວັນຫລັງຈາກວັນໄດ້ຍື່ນຄຳຮ້ອງຂໍ 3. ເມື່ອມີການຈົດທະບຽນແບບອຸດສາຫະກຳແລ້ວ ບຸກຄົນທີ່ສາມທີ່ສົນໃຈ |

| ຂໍ້ມູນພື້ນຖານ | |
|---|---|
| | ສາມາດສະເໜີຮ້ອງຂໍຄັດຄ້ານ ຫລື ຍົກເລີກ ກ່ຽວກັບ ການຈົດທະບຽນດັ່ງກ່າວ ພາຍໃນກໍານົດ 5 ປີນັບແຕ່ວັນພິມເຜີຍແຜ່ ໃນຈົດໝາຍເຫດທາງລັດຖະການ ເປັນຕົ້ນໄປ |

| ຄຸນະສົມບັດ ແລະ ເອກະສານປະກອບ | | |
|---|---|---|
| ໄລຍະເວລາໃນການພິຈາລະນາຄໍາຮ້ອງ ໃນການອອກໃບອະນຸຍາດ | 180 | |
| ຄຸນະສົມບັດຂອງຜູ້ຂໍໃບອະນຸຍາດ | 1. ເງື່ອນໄຂຂອງ ແບບອຸດສາຫະກໍາ ທີ່ຈະໄດ້ຮັບການຈົດທະບຽນ ມີດັ່ງນີ້: (i) ຕ້ອງເປັນແບບໃໝ່ ຊຶ່ງບໍ່ເຄີຍຖືກເປີດເຜີຍ ສູ່ສາທາລະນະຊົນມາກ່ອນ ດ້ວຍວາລະສານ ຫລື ດ້ວຍການນໍາໃຊ້ຕົວຈິງ ຫລື ດ້ວຍການວາງສະແດງ ຫລື ດ້ວຍຮູບການອື່ນ ຢູ່ ສປປ ລາວ ຫລື ແຫ່ງໃດໜຶ່ງໃນໂລກ ກ່ອນວັນຍື່ນຄໍາຮ້ອງ ຫລື ກ່ອນວັນບຸລິມະສິດຂອງຄໍາຮ້ອງຂໍຈົດທະບຽນ; ແລະ (ii) ຕ້ອງເປັນສິ່ງປະດັບ ຊຶ່ງເຮັດໃຫ້ ວັດຖຸທີ່ນໍາເອົາແບບໄປໃຊ້ ຫລື ເອົາແບບໄປຕິດໃສ່ຕົວຂອງວັດຖຸເອງ ເກີດມີຮູບຊົງພາຍນອກພິເສດ 2. ບຸກຄົນທີ່ມີສິດໄດ້ຮັບການປົກປ້ອງສິດ ມີດັ່ງນີ້: (i) ເປັນພົນລະເມືອງລາວ ຫລື ຜູ້ທີ່ມີທີ່ຢູ່ອາໄສ ຢູ່ ສປປ ລາວ ຫລື ນິຕິບຸກຄົນ ຫລື ການຈັດຕັ້ງທີ່ສ້າງຕັ້ງຂຶ້ນ ພາຍໃຕ້ກົດໝາຍຂອງ ສປປ ລາວ; (ii) ບຸກຄົນທີ່ມີສັນຊາດ ຫລື ມີທີ່ຢູ່ອາໄສຢູ່ ປະເທດໃດໜຶ່ງ ຊຶ່ງເປັນພາຄີຂອງສົນທິສັນຍາປາຣີ ຫລື ຂໍ້ຕົກລົງສາກົນອື່ນ ກ່ຽວກັບ ການປົກປ້ອງຊັບສິນອຸດສາຫະກໍາ ທີ່ ສປປ ລາວ ເຂົ້າຮ່ວມເປັນພາຄີ; (iii) ບຸກຄົນ, ນິຕິບຸກຄົນ ຫລື ການຈັດຕັ້ງ ທີ່ມີສະຖານທີ່ດໍາເນີນການຄ້າ ແລະ ອຸດສາຫະກໍາຕົວຈິງ ແລະ ມີປະສິດທິຜົນ ຢູ່ໃນອານາເຂດຂອງປະເທດໃດໜຶ່ງ ທີ່ເປັນພາຄີຂອງ ສົນທິສັນຍາປາຣີ ຫລື ຂໍ້ຕົກລົງສາກົນອື່ນ ກ່ຽວກັບ ການປົກປ້ອງຊັບສິນອຸດສາຫະກໍາ ທີ່ ສປປ ລາວ ເຂົ້າຮ່ວມເປັນພາຄີ | |
| ມີເຫດຜົນໃດບໍ່ທີ່ເຈົ້າໜ້າທີ່ ຈະປະຕິເສດການຂໍໃບອະນຸຍາດ? | ປະຕິເສດໃນກໍລະນີເປັນແບບອຸດສາຫະກໍາ ທີ່ບໍ່ສາມາດຈົດທະບຽນໄດ້ ໄດ້ແກ່: (i) ແບບ ທີ່ມີຮູບຊົງພາຍນອກ ເກີດຈາກຮູບຊົງເຕັກນິກຂອງວັດຖຸ ຊຶ່ງແມ່ນວັດຖຸທີ່ແບບດັ່ງກ່າວຕິດຢູ່; ຫລື (ii) ແບບທີ່ຂັດຕໍ່ຄວາມເປັນລະບຽບຮຽບຮ້ອຍ ຂອງສັງຄົມ ແລະ ຮີດຄອງປະເພນີອັນດີງາມຂອງຊາດ | |

| ຂໍ້ມູນຕິດພັນກັບ ການຕໍ່ອາຍຸໃບອະນຸຍາດ | |
|---|---|
| ໃບອະນຸຍາດມີກໍານົດອາຍຸ ຫລືບໍ່? | ໃບອະນຸຍາດມີອາຍຸນໍາໃຊ້ ຈັກເດືອນ? |
| ແມ່ນແລ້ວ | 180 |
| ຂັ້ນຕອນ ແລະ ເງື່ອນໄຂ ສໍາລັບການຕໍ່ອາຍຸໃບ | ເພື່ອຮັກສາອາຍຸການປົກປ້ອງນັ້ນ, ເຈົ້າຂອງແບບອຸດສາຫະກໍາ ຕ້ອງຈ່າຍຄ່າທໍານຽມລ່ວງໜ້າ |

| ຂໍ້ມູນຕິດພັນກັບ ການຕໍ່ອາຍຸໃບອະນຸຍາດ | |
|---|---|
| **ອະນຸຍາດ** | ແຕ່ລະປີ |

| ຄ່າທໍານຽມ | | | | |
|---|---|---|---|---|
| **ມີຄ່າທໍານຽມ ແບບຟອມຄໍາ ຮ້ອງ ຫລື ບໍ່?** | **ຄ່າບໍລິການວິຊາ ການ** | **ຄ່າທໍານຽມ** | **ຄ່າ ແບບຟອມ ຄໍາຮ້ອງ** | **ຄ່າໃຊ້ຈ່າຍທັງໝົດ** |
| ແມ່ນແລ້ວ | 200000.00 | 0.00 | 100000.00 | 300000.00 |
| **ຄໍາເຫັນ** | ອີງຕາມ ຄໍາແນະນໍາຂອງເຈົ້າໜ້າທີ່ | | | |

| ຄ່າທໍານຽມການຕໍ່ອາຍຸ | | | | |
|---|---|---|---|---|
| **ມີຄ່າທໍານຽມ ແບບຟອມ ຄໍາຮ້ອງ ຂໍຕໍ່ອາຍຸ ຫລືບໍ່?** | **ຄ່າບໍລິການວິຊາການ** | **ຄ່າທໍານຽມ** | **ຄ່າ ແບບຟອມ ຄໍາຮ້ອງ** | **ຄ່າໃຊ້ຈ່າຍທັງໝົດ** |
| ແມ່ນແລ້ວ | 100000.00 | 0.00 | 0.00 | 100000.00 |
| **ຄໍາເຫັນ** | ອີງຕາມ ຄໍາແນະນໍາຂອງເຈົ້າໜ້າທີ່ | | | |

| ກົດລະບຽບທີ່ກ່ຽວຂ້ອງ | | | |
|---|---|---|---|
| **ຊື່ກົດລະບຽບ** | **ເລກທີ** | **ວັນທີ** | **ຄໍາເຫັນ** |
| ກົດໝາຍວ່າດ້ວຍ ຊັບສິນທາງປັນຍາ (ສະບັບ ປັບປຸງ) | 01/ສພຊ | 20.12.2011 | ພາກທີ III ຊັບສິນອຸດສາຫະກໍາ ໝວດທີ 1 ເງື່ອນໄຂຂອງຊັບສິນອຸດສາຫະກໍາ (ມາດຕາ 15) ໝວດທີ 2 ຊັບສິນອຸດສາຫະກໍາທີ່ບໍ່ສາມາດຈົດທະບຽນ (ມາດຕາ 22) ໝວດທີ 3 ການປົກປ້ອງຊັບສິນອຸດສາຫະກໍາ (ມາດຕາ 26, 27, 32, 37 ຫາ 41) ໝວດທີ 5 ອາຍຸການປົກປ້ອງຊັບສິນອຸດສາຫະກໍາ (ມາດຕາ 50) |

| ເອກະສານປະກອບ |
|---|
| **ຊື່ເອກະສານ** |
| ໃບຢັ້ງຢືນການຊໍາລະຄ່າທໍານຽມ |
| ບົດສັງເຂບ |
| ຮູບແຕ້ມ |
| ໜັງສືມອບສິດ |
| ໃບຄໍາຮ້ອງ |

| ສະຖິຕິ (ທີ່ອອກໃໝ່ ຫລື ທີ່ຕໍ່ອາຍຸ) | | |
|---|---|---|
| **ປີ** | **ອອກໃໝ່** | **ຕໍ່ອາຍຸ** |
| 2016 | 17 | 30 |